ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນສູງສຸດ
ກະຊວງຍຸຕິທຳ
ກະຊວງປ້ອງກັນຄວາມສະຫງົບ

ເລກທີ...015......../ອອປສ, ກຍ, ປກສ
ນະຄອນຫຼວງວຽງຈັນ, ວັນທີ 09.09.2019

# ຄຳແນະນຳຮ່ວມ

ລະຫວ່າງ:

**ອົງການໄອຍະການປະຊາຊົນສູງສຸດ, ກະຊວງຍຸຕິທຳ ແລະ ກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍ ການທັບເອົາພະນັກງານອົງການໄອຍະການປະຊາຊົນ ແລະ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ປະຈຳການຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ.**

**ເຖິງ:** ກົມຕິດຕາມກວດກາຄ້າຍຄຸມຂັງ-ດັດສ້າງ, ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ກົມຕຳຫຼວດຄຸມຂັງ-ດັດສ້າງ, ກົມໃຫຍ່ຕຳຫຼວດ, ອົງການໄອຍະການປະຊາຊົນ, ພະແນກຍຸຕິທຳ ແລະ ກອງບັນຊາການ ປກສ ຂັ້ນແຂວງ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງພະນັກງານ ອົງການໄອຍະການປະຊາຊົນ ແລະ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ປະຈຳການຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ.

- ອີງຕາມ ປະມວນກົດໝາຍອາຍາ ສະບັບ ເລກທີ 013/ສພຊ, ລົງວັນທີ 17 ພຶດສະພາ 2017;
- ອີງຕາມ ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ ປີ 2017) ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ບົດບັນທຶກຮ່ວມ ສີ່ພາກສ່ວນ ກ່ຽວກັບການດຳເນີນຄະດີຕາມຂະບວນຍຸຕິທຳ ຄັ້ງທີ V ສະບັບລົງວັນທີ 05 ທັນວາ 2017.

ວຽກງານຄຸມຂັງ ເປັນວຽກງານທີ່ມີຄວາມໝາຍ ຄວາມສຳຄັນ ຊຶ່ງໄດ້ຮັບການຄຸ້ມຄອງດ້ວຍ ລັດຖະທຳມະນູນ ແລະ ກົດໝາຍ, ຜ່ານມາ ການປະຕິບັດກົດໝາຍຢູ່ຄ້າຍຄຸມຂັງ ທີ່ຂຶ້ນກັບສູນກາງ ແລະ ທ້ອງຖິ່ນຄຸ້ມຄອງກໍໄດ້ຈັດຕັ້ງປະຕິບັດຖືກຕ້ອງສອດຄ່ອງຕາມກົດໝາຍ ຢ່າງເປັນເອກະພາບ ລະຫວ່າງ ສາມພາກສ່ວນເຊັ່ນ: ອົງການໄອຍະການປະຊາຊົນສູງສຸດ, ກະຊວງຍຸຕິທຳ ແລະ ກະຊວງປ້ອງກັນຄວາມສະຫງົບ. ແຕ່ຍ້ອນສະພາບການເສດຖະກິດ-ສັງຄົມມີການຜັນແປ ຊຶ່ງເປັນສາເຫດພາໃຫ້ມີປະກົດການຫຍໍ້ທໍ້ຂອງສັງຄົມ, ເກີດມີການກະທຳຜິດ ແລະ ມີນັກໂທດເພີ່ມຂຶ້ນ, ອີກດ້ານໜຶ່ງກົນໄກປະສານງານ ລະຫວ່າງ ສາມພາກສ່ວນຜ່ານມາຍັງບໍ່ທັນກົມກຽວເທົ່າທີ່ຄວນ.

ສະນັ້ນ ເພື່ອເປັນການປັບປຸງກົນໄກປະສານສົມທົບ ລະຫວ່າງ: ສາມພາກສ່ວນໃຫ້ມີການໂລ່ງລ່ຽນກົມກຽວ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດໂດຍສະເພາະແມ່ນການທັບເອົາພະນັກງານຂອງຕົນໄປປະຈຳການຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ ໃນຂອບເຂດທົ່ວປະເທດ.

**ອົງການໄອຍະການປະຊາຊົນສູງສຸດ, ກະຊວງຍຸຕິທໍາ ແລະ ກະຊວງປ້ອງກັນຄວາມສະຫງົບ**

**ອອກຄໍາແນະນໍາຮ່ວມ:**

**1. ຈຸດປະສົງ ແລະ ລະດັບຄາດໝາຍ**

- ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານຄຸມຂັງ ໃຫ້ຖືກຕ້ອງສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ, ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແລະ ເຈົ້າໜ້າທີ່ຕໍາຫຼວດຄຸມຂັງ;

- ເພື່ອສ້າງກົນໄກການປະສານສົມທົບໃນການຈັດຕັ້ງປະຕິບັດກົດໝາຍຢູ່ຄ້າຍຄຸມຂັງ **ແລະ ຄ້າຍກັກຂັງຊົ່ວຄາວ** ລະຫວ່າງ ອົງການໄອຍະການປະຊາຊົນສູງສຸດ, ກະຊວງຍຸຕິທໍາ ແລະ ກະຊວງປ້ອງກັນຄວາມສະຫງົບ ໃຫ້ມີຄວາມເປັນເອກະພາບ, ກົມກຽວ ເພື່ອຊຸກຍູ້ຊຶ່ງກັນ ແລະ ກັນ ໃນການປະຕິບັດສິດ ແລະ ໜ້າທີ່ໃຜລາວ;

- ເພື່ອເປັນການຍົກສູງຄວາມຮັບຜິດຊອບຂອງພະນັກງານ ແຕ່ລະພາກສ່ວນໃນການຈັດຕັ້ງປະຕິບັດວຽກງານຮ່ວມກັນໃຫ້ມີຄວາມເປັນເອກະພາບ, ຍຸຕິທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້;

- ແນໃສ່ເຮັດໃຫ້ວຽກງານຄຸມຂັງ ໄດ້ຮັບການປັບປຸງ ແລະ ແກ້ໄຂຢ່າງເປັນລະບົບ, ຖືກຕ້ອງ ສອດຄ່ອງກັບກົດໝາຍ ແລະ ລະບຽບການ ແລະ ສາມາດລຶບລ້າງບັນດາຫາງສຽງຂອງສັງຄົມກ່ຽວກັບວຽກງານດັ່ງກ່າວ ໃຫ້ໝົດໄປ.

**2. ຫ້ອງປະຈໍາການຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ**

ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ. ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ຈັດຕັ້ງເປັນຫ້ອງການປະຈໍາການ ຊຶ່ງປະກອບມີພະນັກງານຈາກ ອົງການໄອຍະການປະຊາຊົນ, ຂະແໜງຍຸຕິທໍາ ແລະ ຂະແໜງປ້ອງກັນຄວາມສະຫງົບປະຈໍາຢູ່ຮ່ວມກັນເພື່ອເຮັດໜ້າທີ່ຕາມພາລະບົດບາດຂອງຕົນ.

**3. ເງື່ອນໄຂຂອງພະນັກງານອົງການໄອຍະການປະຊາຊົນ ແລະ ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຜູ້ທີ່ຈະປະຈໍາການຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ ມີ ດັ່ງນີ້:**

- ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທໍາປະຕິວັດ, ມີຈັນຍາທໍາ, ມີຄວາມສັດຊື່ບໍລິສຸດຕໍ່ການປະຕິບັດໜ້າທີ່ຂອງຕົນ;

- ຕ້ອງມີຄວາມຮູ້ ແລະ ຄວາມສາມາດໃນການໂຄສະນາ ແລະ ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ;

- ມີປະສົບການໃນວຽກງານໄອຍະການປະຊາຊົນ ແລະ ວຽກງານການຈັດຕັ້ງປະຕິບັດຄໍາຕັດສິນຂອງສານຕໍ່ເນື່ອງຢ່າງໜ້ອຍ 03 ປີ ຂຶ້ນໄປ;

- ມີສຸຂະພາບແຂງແຮງດີ.

**4. ໜ້າທີ່ ແລະ ຂອບເຂດສິດ ຂອງພະນັກງານທີ່ປະຈໍາການຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ**

**4.1 ພະນັກງານອົງການໄອຍະການທີ່ປະຈໍາການຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ ມີ ໜ້າທີ່ ແລະ ຂອບເຂດສິດ ຄື:**

- ຕິດຕາມ, ເກັບກໍາຈໍານວນ, ລາຍຊື່ຜູ້ຖືກກັກຕົວ, ກັກຂັງ, ຈໍາເລີຍ ແລະ ນັກໂທດ ເຂົ້າ-ອອກ ປະຈໍາວັນ ແລະ ເຂົ້າ-ອອກປິ່ນປົວ ນໍາເຈົ້າໜ້າທີ່ຕໍາຫຼວດຄຸມຂັງ, ກວດກາຄວາມຖືກຕ້ອງຂອງບັນດາເອກະສານທີ່ກ່ຽວຂ້ອງ;

- ເຂົ້າຮ່ວມ, ຄົ້ນຄວ້າ, ພິຈາລະນາ, ຄັດເລືອກຈັດແບ່ງປະເພດ ແລະ ຂຶ້ນບັນຊີນັກໂທດທີ່ມີເງື່ອນໄຂສະເໜີອອກປິ່ນປົວ, ປ່ອຍຕົວກ່ອນກໍານົດໂດຍມີເງື່ອນໄຂ, ບັນຊີລາຍຊື່ນັກໂທດສະເໜີໃຫ້ອະໄພຍະໂທດ, ກວດກາການຈັດຕັ້ງປະຕິບັດໃຫ້ອະໄພຍະໂທດ ຕາມລັດຖະດໍາລັດຂອງປະທານປະເທດ;

- ກວດບັນຊີລາຍຊື່ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ໃນສະຖານທີ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ, ຜູ້ທີ່ໄດ້ຮັບການອະນຸຍາດປິ່ນປົວ;

- ກວດກາຄຳສັ່ງ ແລະ ລະບຽບການຕ່າງໆ ຂອງຫົວໜ້າຮັບຜິດຊອບສະຖານທີ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ ເພື່ອໃຫ້ສອດຄ່ອງ ກັບກົດໝາຍ ແລະ ໃຫ້ຫົວໜ້າຮັບຜິດຊອບດັ່ງກ່າວ ອະທິບາຍເຫດຜົນຂອງການລະເມີດກົດໝາຍ;

- ສະຫຼຸບລາຍງານການປະຕິບັດໜ້າທີ່ວຽກງານຂອງຕົນ ປະຈຳອາທິດ, ປະຈຳເດືອນ, ປະຈຳປີ ເປັນປົກກະຕິໃຫ້ຫົວໜ້າກົມຕິດຕາມກວດກາຄ້າຍຄຸມຂັງ-ດັດສ້າງ, ຫົວໜ້າອົງການໄອຍະການປະຊາຊົນ ທີ່ຕົນສັງກັດຢູ່;

- ຂໍຄຳເຫັນຈາກຂັ້ນເທິງຂອງຕົນ ກ່ຽວກັບການສະເໜີເລື່ອງຕ່າງໆ ຂອງເຈົ້າໜ້າທີ່ຕຳຫຼວດຄ້າຍຄຸມຂັງ-ດັດສ້າງ ແລະ ພະນັກງານປະຕິບັດຕາມຄຳຕັດສິນຂອງສານ ທີ່ປະຈຳການຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ;

- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນ.

4.2 ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ປະຈຳການຢູ່ຄ້າຍຄຸມຂັງ ມີໜ້າທີ່ ແລະ ຂອບເຂດສິດ ຄື:

- ກວດກາ, ຄົ້ນຄວ້າຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງເພື່ອກະກຽມເງື່ອນໄຂໃນການຈັດຕັ້ງປະຕິບັດ, ກໍລະນີນັກໂທດຄົນໃດທີ່ບໍ່ທັນມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ກໍໃຫ້ພົວພັນປະສານກັບພາກສ່ວນທີ່ກ່ຽວຂ້ອງ ນຳເອົາຄຳຕັດສິນມາໃຫ້ເຈົ້າໜ້າທີ່ຄ້າຍຄຸມຂັງ ເພື່ອນຳໃຊ້ຕາມລະບຽບການ ວິຊາສະເພາະ;

- ຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມຂັ້ນຕອນຂອງກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບຜູ້ຖືກປະຕິບັດໂທດຢູ່ຄ້າຍຄຸມຂັງ;

- ສຶກສາອົບຮົມຜູ້ຖືກປະຕິບັດຄຳຕັດສິນຂອງສານທີ່ພວມປະຕິບັດໂທດ ຢູ່ຄ້າຍຄຸມຂັງ, ພໍ່ແມ່ ແລະ ຍາດພີ່ນ້ອງຂອງນັກໂທດ;

- ສ້າງບົດບັນທຶກ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ, ການມອບ-ຮັບເງິນຄ່າປັບໄໝ, ຄ່າເສຍຫາຍທາງແພ່ງ, ຄ່າທຳນຽມສານ, ວັດຖຸມີຄ່າ ແລະ ຊັບສິ່ງຂອງທີ່ສານຕັດສິນຮິບເປັນຂອງລັດ;

- ການສ້າງບົດບັນທຶກການມອບ-ຮັບເງິນ ທຸກຄັ້ງຕ້ອງຮັບປະກັນເນື້ອໃນຄົບຖ້ວນ, ຈະແຈ້ງ, ໂປ່ງໃສ ແລະ ມີຄວາມຍຸຕິທຳຖືກຕ້ອງຕາມກົດໝາຍ ໂດຍນຳໃຊ້ໃບບິນເກັບເງິນຂອງກະຊວງການເງິນ ເປັນເອກະພາບກັນໃນທົ່ວປະເທດ, ຫຼີກເວັ້ນການສວຍໃຊ້ອຳນາດ, ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;

- ສຳລັບເງິນທີ່ເກັບໄດ້ນັ້ນ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງມອບໃຫ້ການເງິນພະແນກຍຸຕິທຳຂັ້ນແຂວງ, ຫ້ອງການຍຸຕິທຳຂັ້ນເມືອງ ຫຼື ຜູ້ຖືກເສຍຫາຍທາງແພ່ງ ເປັນແຕ່ລະອາທິດ;

- ສະເໜີໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂັ້ນແຂວງ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂັ້ນເມືອງ ທວງເອົາຂອງກາງຄະດີ ລວມທັງບົດບັນທຶກການຍຶດ, ການອາຍັດ ຂອງກາງຄະດີດັ່ງກ່າວທີ່ຄ້າງຄາ ຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳມາຈັດຕັ້ງປະຕິບັດ;

- ສ້າງບົດບັນທຶກກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ, ຄ່າປັບໄໝທາງອາຍາ, ຄ່າທຳນຽມສານ ພ້ອມທັງ ສັງລວມຂໍ້ມູນ ເຊັ່ນ: ຮູບຖ່າຍ, ປະຫວັດ ແລະ ອື່ນໆ ຂອງນັກໂທດ ທີ່ຈະຖືກປ່ອຍຕົວ;

- ການເຄື່ອນຍ້າຍນັກໂທດ, ການອະໄພຍະໂທດ, ນັກໂທດທີ່ເປັນຄົນຕ່າງປະເທດ ກ່ອນຈະໝົດໂທດ ຫຼື ໄດ້ຮັບການປ່ອຍຕົວຕ້ອງໄດ້ເຮັດຈົດໝາຍບັນທຶກຈັດຕັ້ງປະຕິບັດຄຳຕັດສິນຂອງສານກ່ອນ ແລ້ວລາຍງານໃຫ້ຫ້ອງການ

ຈັດຕັ້ງປະຕິບັດຄຳຕັດສິນຂອງສານຂັ້ນແຂວງ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຂັ້ນເມືອງ ຮັບຊາບ ເພື່ອມີທິດຊີ້ນຳ;

- ໃນກໍລະນີຈຳເປັນຕ້ອງໄດ້ນຳໃຊ້ມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ລາຍງານເປັນລາຍລັກອັກສອນ ເພື່ອຂໍທິດຊີ້ນຳຈາກຫົວໜ້າຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂັ້ນແຂວງ, ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂັ້ນເມືອງ ຍົກເວັ້ນກໍລະນີຮີບດ່ວນ;
- ສະຫຼຸບການເຄື່ອນໄຫວວຽກງານຂອງຕົນ ປະຈຳອາທິດ, ປະຈຳເດືອນ, ປະຈຳປີ ຢ່າງເປັນປົກກະຕິ ເພື່ອລາຍງານສົ່ງໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂັ້ນແຂວງ ແລະ ໜ່ວຍງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂັ້ນເມືອງຂອງຕົນ ພ້ອມທັງສົ່ງໃຫ້ເຈົ້າໜ້າທີ່ ປກສ ແລະ ພະນັກງານອົງການໄອຍະການຮັບຊາບນຳ;
- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

4.3 ເຈົ້າໜ້າທີ່ຕຳຫຼວດຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

- ຈັດຕັ້ງກຳລັງປ້ອງກັນເວນຍາມຄ້າຍ ໃຫ້ຮັບປະກັນຄວາມສະຫງົບປອດໄພຮອບດ້ານ ຢູ່ໃນຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ ທີ່ຕົນຮັບຜິດຊອບ;
- ຈັດຕັ້ງຄຸ້ມຄອງ, ສຶກສາອົບຮົມ, ຝຶກວິຊາຊີບ ແລະ ຈັດຕັ້ງການອອກແຮງງານທຳການຜະລິດ ແກ້ໄຂຊີວິດການເປັນຢູ່ໃຫ້ຜູ້ຖືກຫາ, ຈຳເລີຍ, ນັກໂທດ ແລະ ຜູ້ຖືກດັດສ້າງ ຕາມແນວທາງຂອງພັກ, ນະໂຍບາຍຂອງລັດ, ຫຼັກການວິຊາສະເພາະຂອງກຳລັງປ້ອງກັນຄວາມສະຫງົບຢ່າງເຂັ້ມງວດ;
- ສະໜອງບັນດາຂໍ້ມູນ, ເອກະສານ ເປັນລາຍລັກອັກສອນ ທີ່ກ່ຽວພັນກັບຜູ້ຖືກຫາ, ຈຳເລີຍ, ນັກໂທດ ໃຫ້ຂັ້ນເທິງ ຫຼື ພາກສ່ວນທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ ແລະ ທັນເວລາ;
- ເປັນເຈົ້າການຈັດຕັ້ງການສຳຫຼວດກວດກາ ແລະ ຈັດແບ່ງປະເພດ ປະຈຳອາທິດ, ປະຈຳເດືອນ, ປະຈຳປີ ໃຫ້ແກ່ນັກໂທດ;
- ເປັນເຈົ້າການຈັດຕັ້ງຄົ້ນຄວ້າບັນຊີລາຍຊື່ນັກໂທດຜູ້ກ້າວໜ້າ ສະເໜີໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດ, ປ່ອຍຕົວ ຕາມລັດຖະບັນຍັດຂອງປະທານປະເທດ ແລະ ປ່ອຍຕົວນັກໂທດກ່ອນກຳນົດໂດຍມີເງື່ອນໄຂ ຕາມກົດໝາຍ;
- ຮຽກເຊີນຜູ້ຕາງໜ້າ ອົງການໄອຍະການປະຊາຊົນ, ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ປະຈຳການຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ ເພື່ອປະຊຸມ, ປຶກສາຫາລື ແກ້ໄຂບັນຫາທີ່ພົວພັນເຖິງການປະຕິບັດນະໂຍບາຍ ຫຼື ມາດຕະການຕໍ່ນັກໂທດ, ຕໍ່ຜູ້ຖືກກັກຂັງ ໃນການຈັດຕັ້ງປະຕິບັດກົດໝາຍ;
- ສະຫຼຸບລາຍງານສະພາບການຈັດຕັ້ງປະຕິບັດຄຳແນະນຳຮ່ວມສະບັບນີ້ ປະຈຳອາທິດ, ປະຈຳເດືອນ, ປະຈຳປີໃຫ້ຂັ້ນເທິງຂອງຕົນ;
- ຂໍຄຳເຫັນຈາກຂັ້ນເທິງຂອງຕົນ ກ່ຽວກັບຄຳສະເໜີຕ່າງໆ ຂອງພະນັກງານອົງການໄອຍະການປະຊາຊົນ, ພະແນກຍຸຕິທຳ ຂັ້ນແຂວງ ທີ່ປະຈຳການຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ ຂອງຕົນ;
- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການສະເພາະຂອງຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ ຫຼື ຕາມການມອບໝາຍຂອງຂັ້ນເທິງ.

5. ລະບອບແບບແຜນວິທີເຮັດວຽກ

- ມີລະບອບແບບແຜນວິທີເຮັດວຽກຕາມທີ່ໄດ້ກຳນົດໃນຄຳແນະນຳຮ່ວມສະບັບນີ້ ຢູ່ຂັ້ນສູນກາງ ກົມຕິດຕາມກວດກາຄ້າຍຄຸມຂັງ-ດັດສ້າງ, ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ກົມຕຳຫຼວດຄຸມຂັງ-ດັດສ້າງ, ກົມໃຫຍ່ຕຳຫຼວດ ແລະ ຢູ່ຂັ້ນທ້ອງຖິ່ນ ອົງການໄອຍະການປະຊາຊົນ, ພະແນກຍຸຕິທຳ ແລະ ກອງບັນຊາການປ້ອງ

ກັນຄວາມສະຫງົບ ຂັ້ນແຂວງ, ໂດຍຈັດຕັ້ງປະຕິບັດປະສານສົມທົບ ສະຫຼຸບຖອດຖອນບົດຮຽນ, ປະຕິບັດລະບອບລາຍງານສ່ອງແສງຕາມສາຍຕັ້ງ-ສາຍຂວາງ ປະຈໍາອາທິດ, ປະຈໍາເດືອນ ຢ່າງເປັນປົກກະຕິ;

- ຈໍານວນພະນັກງານອົງການໄອຍະການປະຊາຊົນ ແລະ ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ທີ່ປະຈໍາຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ ແຕ່ລະພາກສ່ວນ 1-2 ຄົນ, ໂດຍຜັດປ່ຽນ 6 ເດືອນໃດຕໍ່ເທື່ອຄົນ ສ່ວນການຈັດຕັ້ງ, ຊີວິດການເມືອງ ແລະ ວິຊາສະເພາະ ແມ່ນຂຶ້ນກັບສາຍຕັ້ງຂອງຕົນ;

- ຫ້ອງການປະຈໍາການ ຂອງພະນັກງານອົງການໄອຍະການປະຊາຊົນ ແລະ ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ມີຊື່ເອີ້ນວ່າ: "ຫ້ອງປະຈໍາການຂອງພະນັກງານອົງການໄອຍະການປະຊາຊົນ", "ຫ້ອງປະຈໍາການ ຂອງພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ" ຢູ່ຂັ້ນສູນກາງມອບໃຫ້ກົມຕໍາຫຼວດຄຸມຂັງ-ດັດສ້າງ, ກົມໃຫ່ຍຕໍາຫຼວດ ແລະ ຢູ່ຂັ້ນທ້ອງຖິ່ນມອບໃຫ້ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ເປັນຜູ້ຈັດສັນຕາມເງື່ອນໄຂຕົວຈິງ, ຖ້າແຂວງ-ນະຄອນຫຼວງໃດຍັງບໍ່ທັນມີ ໃຫ້ນໍາສະເໜີຕໍ່ອໍານາດການປົກຄອງຂັ້ນແຂວງ.

6. ມາດຕະການຈັດຕັ້ງປະຕິບັດ

- ຢູ່ຂັ້ນສູນກາງ ມອບໃຫ້ກົມຕິດຕາມກວດກາຄ້າຍຄຸມຂັງ, ກົມຄຸ້ມຄອງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ, ກົມຕໍາຫຼວດຄຸມຂັງ-ດັດສ້າງ, ກົມໃຫ່ຍຕໍາຫຼວດ ແລະ ຢູ່ຂັ້ນທ້ອງຖິ່ນ ມອບໃຫ້ອົງການໄອຍະການປະຊາຊົນ, ພະແນກຍຸຕິທໍາ ແລະ ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ຈັດຕັ້ງເຜີຍແຜ່ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດຄໍາແນະນໍາຮ່ວມສະບັບນີ້ດ້ວຍຄວາມຮັບຜິດຊອບສູງ ພ້ອມທັງຫັນເປັນແຜນການ, ລະບຽບການ ໃນການຈັດຕັ້ງປະຕິບັດຢູ່ຂັ້ນຕົນຮັບຜິດຊອບຢ່າງມີປະສິດຕິຜົນ;

- ມອບໃຫ້ກົມຕິດຕາມກວດກາຄ້າຍຄຸມຂັງ ອົງການໄອຍະການປະຊາຊົນສູງສຸດ, ກົມຄຸ້ມຄອງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ກະຊວງຍຸຕິທໍາ, ກົມຕໍາຫຼວດຄຸມຂັງ-ດັດສ້າງ ແລະ ກົມໃຫ່ຍຕໍາຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນໃຈກາງໃນການຊີ້ນໍາ ແລະ ຕິດຕາມໃນການຈັດຕັ້ງຜັນຂະຫຍາຍຄໍາແນະນໍາຮ່ວມສະບັບນີ້.

ຜ່ານການຈັດຕັ້ງປະຕິບັດຄໍາແນະນໍາຮ່ວມສະບັບນີ້ ຫາກມີຂໍ້ສະດວກ ຫຼື ຂໍ້ຫຍຸ້ງຍາກປະການໃດກໍໃຫ້ສະຫຼຸບລາຍງານຄະນະນໍາຂອງຕົນເພື່ອໃຫ້ທິດຊີ້ນໍາເປັນແຕ່ລະໄລຍະ;

- ຄໍາແນະນໍາຮ່ວມສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

| ລັດຖະມົນຕີ<br>ກະຊວງປ້ອງກັນຄວາມສະຫງົບ | ລັດຖະມົນຕີ<br>ກະຊວງຍຸຕິທໍາ | ຫົວໜ້າ<br>ອົງການໄອຍະການປະຊາຊົນສູງສຸດ |
|---|---|---|
| ວິໄລ ຫຼ້າຄໍາຟອງ | ໄຊສີ ສັນຕິວົງ | ຄໍາສານ ສຸວົງ |